ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*************0000************

ເອັມເອັສໄອຈີ ໂຊກໄຊ ປະກັນໄພ
MSIG SOKXAY INSURANCE
ເປັນມິດທີ່ດີຕະຫຼອດໄປ

# ສັນຍາຕົວແທນປະກັນໄພທົ່ວໄປ

- ເລກທີ:(ພະນັກງານໃສ່) ____________________
- ນະຄອນຫຼວງ ໃນວັນທີ /ເດືອນ/ປີ ____________________
- ຊື່ນາມສະກຸນ ຕົວແທນທີ່ສະໝັກ ຍິງ/ຊາຍ ____________________

1. **ວັດຖຸປະສົງຂອງສັນຍາ**

ບໍລິສັດ ເອັມເອັສໄອຈີ ໂຊກໄຊ ປະກັນໄພ ຈຳກັດ ຕົກລົງແຕ່ງຕັ້ງ ທ່ານ...............................................ເປັນຕົວແທນສະເພາະຂອງບໍລິສັດຕາມສັນຍານີ້/ບໍ່ມີຖານະເປັນລູກຈ້າງ ພະນັກງານ, ຫຸ້ນສ່ວນ ຫຼື ສະຖານະອື່ນໆ ນອກຈາກຕົວແທນປະກັນໄພທົ່ວໄປເທົ່ານັ້ນ.

2. **ໜ້າທີ່ ແລະ ຄວາມຮັບຜິດຊອບ**

2.1. ຕິດຕໍ່ຈັດຫາ, ຊັກຊວນ ຫຼື ຈັດຫາບຸກຄົນ ຫຼື ນິຕິບຸກຄົນເຂົ້າມາເຮັດສັນຍາປະກັນໄພລົດກັບບໍລິສັດ.

2.2. ອອກສັນຍາປະກັນໄພ ກໍລະນີໄດ້ຮັບການມອບສິດເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ.

2.3. ຮັບສັນຍາປະກັນໄພຈາກບໍລິສັດ ແລະ ນຳສົ່ງສັນຍາປະກັນໄພໃຫ້ແກ່ຜູ້ຊື້ປະກັນໄພ.

2.4. ຮັບຄ່າທຳນຽມຈາກຜູ້ຊື້ປະກັນໄພຕາມສັນຍາປະກັນໄພ ແລະ ນຳສົ່ງບໍລິສັດຕາມກຳນົດ.

2.5. ປະຕິບັດຕາມເງື່ອນໄຂ, ລະບຽບຄຳສັ່ງ ຫຼື ຂໍ້ບັງຄັບຂອງບໍລິສັດທີ່ມີແລ້ວ ແລະ ຈະປະກາດໃຊ້ໃນອານາຄົດ.

2.6. ຍິນຍອມໃຫ້ບໍລິສັດແຈ້ງຂໍ້ມູນກ່ຽວກັບຕົວແທນໃຫ້ໜ່ວຍງານອື່ນໆທີ່ກ່ຽວຂ້ອງຮັບຮູ້.

2.7. ຫ້າມປອມແປງ, ເຮັດຊ້ຳ, ດັດແປງ, ຮຽນແບບ ຫຼື ໃຊ້ເຄື່ອງໝາຍການຄ້າ, ເຄື່ອງໝາຍບໍລິການ, ກາຈ້ຳ ຫຼື ເອກະສານອື່ນໆທັງໝົດ ຫຼື ສ່ວນໃດສ່ວນໜຶ່ງທີ່ເປັນຂອງບໍລິສັດ ຍົກເວັ້ນແຕ່ໄດ້ຮັບຄວາມຍິນຍອມຈາກບໍລິສັດເປັນລາຍລັກອັກສອນ ຫຼື ປະຕິບັດຕາມລະບຽບທີ່ບໍລິສັດໄດ້ກຳນົດ.

2.8. ກໍລະນີທີ່ຕົວແທນບໍ່ສະດວກທີ່ຈະປະຕິບັດໜ້າທີ່ດ້ວຍຕົນເອງ ຖ້າຫາກວ່າຕົວແທນແຕ່ງຕັ້ງ ຫຼື ມອບໝາຍໃຫ້ບຸກຄົນອື່ນປະຕິບັດໜ້າທີ່ແທນ ແລ້ວເກີດຄວາມເສຍຫາຍຈາກການກະທຳຂອງບຸກຄົນອື່ນ ຕົວແທນຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍນັ້ນ ແລະ ບໍລິສັດຈະມີສິດຮຽກຮ້ອງຄ່າເສຍຫາຍຈາກບຸກຄົນອື່ນທີ່ຕົວແທນມອບໝາຍ ຫຼື ແຕ່ງຕັ້ງນັ້ນໂດຍກົງ.

2.9. ເປີດເຜີຍຂໍ້ມູນທັງໝົດ ກ່ຽວກັບການພິຈາລະນາຮັບປະກັນຂອງຕົວແທນ ໃຫ້ບໍລິສັດຮັບຮູ້ ຈົນເຖິງການໃຫ້ຂໍ້ມູນກ່ຽວກັບການປະກັນໄພທີ່ຖືກຕ້ອງແທ້ຈິງ ໃຫ້ແກ່ບຸກຄົນທີ່ຕົວແທນຕິດຕໍ່ນຳ ໃນນີ້ຕົວແທນຕ້ອງຮັບຮອງວ່າ ຂໍ້ມູນທັງໝົດທີ່ກ່ຽວຂ້ອງກັບການເອົາປະກັນໄພ ທີ່ຕົວແທນນຳສະເໜີ ເພື່ອໃຫ້ບໍລິສັດພິຈາລະນາຮັບປະກັນໄພເປັນຄວາມຈິງທຸກປະການ ຊຶ່ງຫາກປາກົດໃນພາຍຫຼັງວ່າ ຂໍ້ມູນດັ່ງກ່າວເປັນຄວາມເທັດ ຕົວແທນປົກປິດຂໍ້ມູນໃດໜຶ່ງທີ່ອາດເຮັດໃຫ້ບໍລິສັດບອກປັດບໍ່ຍອມຮັບເຮັດສັນຍາປະກັນໄພ ຫຼື ອາດກຳນົດອັດຕາຄ່າທຳນຽມປະກັນໄພສູງຂຶ້ນອີກ ຕົວແທນຈະຮັບຜິດຊອບຕໍ່ຄວາມເສຍຫາຍທັງໝົດ.

2.10. ແຈ້ງ ແລະ ສົ່ງຂໍ້ມູນກ່ຽວກັບການຂໍຊື້ປະກັນໄພຂອງບຸກຄົນແຕ່ລະຄົນ ທີ່ຕົວແທນຕິດຕໍ່ຫາ, ຊັກຊວນ ໃຫ້ແກ່ບໍລິສັດທັນທີ ເພື່ອປະກອບການພິຈາລະນາຮັບປະກັນໄພຂອງບໍລິສັດ ຖ້າຫາກວ່າຕົວແທນປະຕິບັດໜ້າທີ່ຊັກຊ້າ ຈົນເກີດວິນາດສະໄພກ່ອນ ຕົວແທນຈະຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍທັງໝົດ.

2.11. ທວງຖາມ ແລະ ຕິດຕາມ ໃຫ້ຜູ້ຊື້ປະກັນໄພຊໍາລະຄ່າທໍານຽມປະກັນໄພແກ່ບໍລິສັດ ພາຍໃນໄລຍະເວລາທີ່ບໍລິສັດກໍານົດ ຫຼື ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ ທັງນີ້ແລ້ວແຕ່ໄລຍະເວລາໃດກໍານົດກ່ອນ ໂດຍນັບແຕ່ວັນທີບໍລິສັດຕົກລົງເຮັດສັນຍາປະກັນໄພທີ່ຕົວແທນຕິດຕໍ່ຫາ, ຈັດຫາ, ຊັກຊວນ ແລະ ຫາກຜູ້ຊື້ປະກັນໄພບໍ່ຊໍາລະຄ່າທໍານຽມປະກັນໄພໃຫ້ແກ່ບໍລິສັດ ພາຍໃນໄລຍະເວລາດັ່ງກ່າວ ບໍ່ວ່າດ້ວຍເຫດຜົນໃດໆກໍ່ຕາມ ຕົວແທນຈະຕ້ອງແຈ້ງໃຫ້ບໍລິສັດຮັບຮູ້ເປັນລາຍລັກອັກສອນ ພ້ອມທັງສົ່ງມອບປະກັນໄພ ແລະ ເອກະສານໃດໜຶ່ງຄືນໃຫ້ແກ່ບໍລິສັດ ເພື່ອບໍລິສັດຈະເຮັດການຍົກເລີກສັນຍາປະກັນໄພດັ່ງກ່າວ ບໍ່ດັ່ງນັ້ນ, ຕົວແທນຈະຕ້ອງຮັບຜິດຊອບຊໍາລະຄ່າທໍານຽມປະກັນໄພທັງໝົດ ຫຼື ຕາມສັດສ່ວນຂອງໄລຍະເວລາ ທີ່ສັນຍາປະກັນໄພໄດ້ຮັບຄວາມຄຸ້ມຄອງແລ້ວ ພ້ອມທັງຄ່າອາກອນມູນຄ່າເພີ່ມ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ບໍລິສັດເສຍຫາຍຈາກສິ່ງດັ່ງກ່າວນັ້ນ ໂດຍຕົວແທນມີໜ້າທີ່ໃນການຕິດຕາມຄ່າທໍານຽມປະກັນໄພ ຕາມໄລຍະເວລາທີ່ສັນຍາປະກັນໄພໄດ້ໃຫ້ຄວາມຄຸ້ມຄອງແລ້ວຈາກຜູ້ຊື້ປະກັນໄພ ແລະ ນໍາສົ່ງຄ່າທໍານຽມປະກັນໄພໃຫ້ແກ່ບໍລິສັດໂດຍທັນທີ່ ກໍລະນີບໍລິສັດບໍ່ໄດ້ຮັບຄ່າທໍານຽມປະກັນໄພຈາກຜູ້ປະກັນໄພ ພາຍໃນໄລຍະເວລາທີ່ບໍລິສັດກໍານົດ ຫຼື ຕາມທີ່ໄດ້ກໍານົດໄວ້ໃນສັນຍາປະກັນໄພ ບໍລິສັດຈະດໍາເນີນການແຈ້ງບອກຍົກເລີກສັນຍາປະກັນໄພໄປຍັງຜູ້ຊື້ປະກັນໄພ.

2.12. ກໍລະນີທີ່ຜູ້ຊື້ປະກັນ ຊໍາລະຄ່າທໍານຽມໃຫ້ແກ່ຕົວແທນ ຕົວແທນຈະຕ້ອງສົ່ງຄ່າທໍານຽມປະກັນໄພດັ່ງກ່າວໃຫ້ແກ່ບໍລິສັດທັນທີຕາມການກໍານົດໄລຍະເວລາໃນການຊໍາລະຂອງແຕ່ລະໂດຍຕົວແທນຈະຕ້ອງບໍ່ນໍາເອົາຄ່າທໍານຽມປະກັນໄພດັ່ງກ່າວ ໄປໃຊ້ ຫຼື ຫາຜົນປະໂຫຍດ ຫຼື ຫັກຄ່າໃຊ້ຈ່າຍໃດໆ ຖ້າຫາກຕົວແທນນໍາເອົາຄ່າທໍານຽມປະກັນໄພໄປໃຊ້ ຫຼື ຫາຜົນປະໂຫຍດ ຫຼື ຫັກຄ່າໃຊ້ຈ່າຍ ຕົວແທນຍິນຍອມໃຊ້ແທນຄ່າເສຍຫາຍທັງໝົດໃຫ້ແກ່ບໍລິສັດ ພ້ອມທັງຈ່າຍດອກເບ້ຍຄ່າທໍານຽມໃນອັດຕາຮ້ອຍລະ 15 ຕໍ່ປີ ນັບແຕ່ວັນທີນໍາເອົາຄ່າທໍານຽມໄປໃຊ້ ຫຼື ຫາຜົນປະໂຫຍດ ແລະ ຫາກເກີດຄວາມສູນຫາຍ ຫຼື ເສຍຫາຍແກ່ຊັບສິນທີ່ເອົາປະກັນໄພ ຊຶ່ງຕົວແທນບໍ່ໄດ້ນໍາສົ່ງຄ່າທໍານຽມໃຫ້ແກ່ບໍລິສັດ ຕົວແທນຈະຕ້ອງຮັບຜິດຊອບໃນຄ່າສິນໄໝທົດແທນ ແລະ ຄ່າເສຍຫາຍອື່ນໆ ທີ່ເກີດຂຶ້ນທັງໝົດ ທັງນີ້ບໍລິສັດມີສິດທີ່ຈະດໍາເນີນຄະດີຕາມກົດໝາຍ.

2.13. ກໍລະນີຜູ້ຊື້ປະກັນໄພບອກເລີກສັນຍາປະກັນໄພ ຕົວແທນຈະຕ້ອງດໍາເນີນການໃຫ້ຜູ້ຊື້ປະກັນໄພເຮັດການຍົກເລີກສັນຍາເປັນລາຍລັກອັກສອນ ຮຽກເກັບສັນຍາປະກັນໄພ ແລະ ເອກະສານໃດໜຶ່ງຄືນໃຫ້ແກ່ບໍລິສັດພ້ອມທັງຮຽກເກັບຄ່າທໍານຽມປະກັນໄພຕາມສັດສ່ວນໄລຍະເວລາທີ່ສັນຍາປະກັນໄພໄດ້ຄຸ້ມຄອງແລ້ວ ຈາກຜູ້ເອົາສັນຍາປະກັນໄພ ແລະ ນໍາສົ່ງໃຫ້ແກ່ບໍລິສັດທັນທີ.

2.14. ຕົວແທນ ຈະຕົກລົງເກັບຮັກສາຂໍ້ມູນທີ່ໄດ້ຮັບ ເນື່ອງຈາກການປະຕິບັດຕາມສັນຍາສະບັບນີ້ເປັນຄວາມລັບ ບໍ່ວ່າສັນຍານີ້ຈະສິ້ນສຸດ ຫຼື ບໍ່ກໍຕາມ.

## 3. ຄ່າບໍາເນັດ, ຄ່າຕອບແທນ ຜົນປະໂຫຍດ

3.1. ຕົວແທນມີສິດໄດ້ຮັບຜົນປະໂຫຍດ, ຄ່າຕອບແທນ, ຄ່າບໍາເນັດ ຫຼື ສິດທິພິເສດໃດໜຶ່ງ ຕາມອັດຕາທີ່ບໍລິສັດປະກາດໃຫ້ຮັບຮູ້ໂດຍຫຍໍ້ ທີສິດໄດ້ຮັບຄ່າຕອບແທນຕາມຜົນງານ ຫຼື ຕໍາແໜ່ງຂອງຕົວແທນ ທີ່ບໍລິສັດກໍາໜົດໄວ້ ແຕ່ຕ້ອງບໍ່ເກີນອັດຕາທີ່ກະຊວງການເງິນກໍານົດ ໂດຍຕົວແທນມີສິດຂໍຮັບຄ່າບໍາເນັດດັ່ງກ່າວ ເມື່ອບໍລິສັດໄດ້ຮັບຄ່າຊໍາລະທໍານຽມປະກັນໄພຮຽບຮ້ອຍແລ້ວ.

3.2. ຫາກຕົວແທນ ມີໜີ້ສິນພາລະຜູກພັນ ຫຼື ຄວາມຮັບຜິດຊອບໃດໜຶ່ງຕໍ່ບໍລິສັດ, ຕົວແທນ ຍິນຍອມໃຫ້ບໍລິສັດນໍາຄ່າຕອບແທນ, ບໍາເນັດ, ຜົນປະໂຫຍດໃດໜຶ່ງທີ່ອາດຈະຕີລາຄາໄດ້, ຫັກລົບໜີ້ກັນໄດ້.

3.3. ບໍ່ວ່າດ້ວຍສາເຫດໃດກໍຕາມ ຫາກບໍລິສັດຕ້ອງຄືນຄ່າທໍານຽມປະກັນໄພ ໃຫ້ແກ່ຜູ້ເອົາປະກັນໄພ ຕົວແທນຕົກລົງຄືນຄ່າບໍາເນັດ, ຄ່າຕອບແທນ, ຜົນປະໂຫຍດ ຫຼື ສິດທິພິເສດໃດໜຶ່ງ ທີ່ໄດ້ຮັບຈາກບໍລິສັດຕາມສັດສ່ວນຂອງຄ່າທໍານຽມປະກັນໄພທີ່ບໍລິສັດຈ່າຍຄືນໃຫ້ແກ່ຜູ້ເອົາປະກັນໄພ ໃຫ້ແກ່ບໍລິສັດທັນທີ.

3.4. ທຸກການຈ່າຍຄ່າຕອບແທນ ຫຼື ຄ່ານາຍໜ້າ ບໍລິສັດຫັກລາຍໄດ້ຈາກຄ່າບໍາເນັດເປັນຈໍານວນ 3% ຂອງຄ່າຄອມມິດຊັ່ນເພື່ອເປັນເງິນຄໍ້າປະກັນຈົນກວ່າຈະຄົບ 25,000,000 ກີບ ຈຶ່ງຈະຢຸດດໍາເນີນຫັກ.

## 4. ການຜ່ອນເວລາ

ຫາກມີການຜ່ອນຜົນການປະຕິບັດໃຫ້ເປັນໄປຕາມສັນຍານີ້ ບໍ່ວ່າຄັ້ງໃດກໍໃຫ້ຖືວ່າເປັນການຜ່ອນຜັນສະເພາະຄັ້ງຄາວເທົ່ານັ້ນ ຈະນໍາມາອ້າງເປັນເຫດໃນການຜ່ອນຜັນໃນຄັ້ງອື່ນໆບໍ່ໄດ້ ທັງນີ້ການຜ່ອນຜັນມີຜົນຕໍ່ຄູ່ສັນຍາ ຝ່າຍທີ່ມີສິດສາມາດບັງຄັບໃຫ້ເປັນໄປຕາມສັນຍານີ້ໄດ້ ແຕ່ຕ້ອງໄດ້ເຮັດໜັງສືແຈ້ງໄປຍັງຄູ່ສັນຍາໄປຍັງອີກຝ່າຍໜຶ່ງ.

**5. ການສິ້ນສຸດຂອງສັນຍາ**

5.1. ຖ້າຫາກຕົວແທນ ປະພຶດຜິດຂໍ້ສັນຍາຂໍ້ໃດຂໍ້ໜຶ່ງ ຫຼື ບໍ່ປະຕິບັດຕາມສັນຍາໃນຖານະທີ່ເປັນຕົວແທນ ອັນເປັນເຫດໃຫ້ບໍລິສັດ ຫຼື ຜູ້ເອົາປະກັນໄດ້ຮັບຄວາມເສຍຫາຍ ບໍລິສັດຈະມີສິດຍົກເລີກສັນຍານີ້ໄດ້ທັນທີ ໂດຍຕົວແທນຍິນຍອມໃຫ້ບໍລິສັດລະງັບການອອກສັນຍາປະກັນໄພ ຫຼື ສິ່ງມອບສັນຍາປະກັນໄພໃຫ້ແກ່ຜູ້ເອົາສັນຍາປະກັນໄພ ທີ່ຕົວແທນຈັດຫາມາໄດ້ ແລະ ຍິນຍອມໃຫ້ບໍລິສັດຖອນການເປັນຕົວແທນຂອງບໍລິສັດໄດ້ທັນທີ.

5.2. ຄູ່ສັນຍາທັງສອງຝ່າຍ ມີສິດບອກຍົກເລີກສັນຍາສະບັບນີ້ໄດ້ ໂດຍການບອກກ່າວເປັນລາຍລັກອັກສອນໃຫ້ອີກຝ່າຍໜຶ່ງຮັບຮູ້ລ່ວງໜ້າຢ່າງໜ້ອຍ 30 ວັນ.

5.3. ຕົວແທນດຳເນີນການອັນໃດອັນໜຶ່ງ ເປັນສາເຫດກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ບໍລິສັດ, ຜູ້ເອົາປະກັນໄພຜູ້ຮັບຜົນປະໂຫຍດຕາມສັນຍາປະກັນໄພ.

5.4. ບໍລິສັດຈະຄືນເງິນຄ້ຳປະກັນໃຫ້ກັບຕົວແທນຫຼັງຫັກໜີ້ສິນ (ຖ້າມີ) ແກ່ຕົວແທນຫຼັງຈາກ 30 ວັນ.

ສັນຍາສະບັບນີ້ມີຂໍ້ຄວາມຖືກຕ້ອງຕົງກັນ 2 ສະບັບ, ຄູ່ສັນຍາທັງສອງຝ່າຍ ໄດ້ອ່ານ ແລະ ເຂົ້າໃຈກັນ ແລະ ເພື່ອເປັນຫຼັກຖານຄູ່ສັນຍາໄດ້ລົງລາຍເຊັນ ແລະ ປະທັບຕາ ໄວ້ເປັນສ່ວນສຳຄັນຕໍ່ໜ້າພະຍານ.

ໃນວັນທີ............ເດືອນ...............ປີ.............. ຄັ້ງທີ່ກຳນົດໄວ້ເບື້ອງຕົ້ນ ແລະ ຄູ່ສັນຍາເກັບຮັກສາໄວ້ຝ່າຍລະໜຶ່ງສະບັບ.

**ບໍລິສັດ ເອັມເອັສໄອຈີ ໂຊກໄຊ ປະກັນໄພ ຈຳກັດ**

| **ຕົວແທນ** | **ຫົວໜ້າຝ່າຍຂາຍ ແລະ ການຕະຫຼາດ** | **ຜູ້ອຳນວຍການໃຫຍ່** |
|---|---|---|
| ເຊັນ.......................................<br>ຊື່ ແລະ ນາມສະກຸນ...................... | ເຊັນ.......................................<br>ຊື່ ແລະ ນາມສະກຸນ...................... | ເຊັນ.......................................<br>ຊື່ ແລະ ນາມສະກຸນ...................... |
| ວັນທີ.................................... | ວັນທີ.................................... | ວັນທີ.................................... |